

# SuPER WE Coffee

## ວຽກເດັ່ນຂອງ ໂຄງການປີ 2024

**ມີນາ:** ການປະເມີນຂະບວນການຜະລິດ ແລະ ການປຸງແຕ່ງກາເຟ, ກອງປະຊຸມ ແລກປ່ຽນບົດຮຽນຊາວກະສິກອນ, ກອງປະຊຸມສະຫຼຸບ ແລະ ແລກປ່ຽນບົດຮຽນ

**ເມສາ:** ກອງປະຊຸມປະຈຳເດືອນຮ່ວມກັບຄູ່ຮ່ວມງານ, ການພົບປະກັນ ຂອງກຸ່ມຜະລິດກາເຟ ແລະ ຜູ້ຊື້-ຂາຍກາເຟ, ວາງສະແດງ ຜະລິດຕະພັນກາເຟພູດອຍ ດາກຈຶງ ທີ່ງານສະເຫຼີມສະຫຼອງຄົບຮອບ 40 ປີ ຂອງແຂວງ ເຊກອງ, ການສົ່ງກາເຟດາກຈຶງໄປກວດຄຸນະພາບທີ່ປະເທດໄທ, ຝຶກອົບຮົມການເປັນສະຫະກອນກາເຟ

**ພຶດສະພາ:** ການເກັບກຳຂໍ້ມູນ ສຳລັບປະເມີນໄລຍະກາງ ຂອງໂຄງການ, ກອງປະຊຸມປະຈຳປີຂອງ EU-Switch Asia

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

**ທາງກົງ**

**400 ຊາວສວນກາເຟ**

**280 ແມ່ຍິງຊົນເຜົ່າ**

**ທາງອ້ອມ**

**4,463 ປະຊາຊົນ**

**2,217 ແມ່ຍິງຊົນເຜົ່າ**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານ ການສະໜັບສະໜູນສ້າງຕັ້ງສູນແປຮູບກາເຟ, ສະໜອງເຕັກນິກ ການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມືວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ





## ມີນາ

### ການປະເມີນຂະບວນການຜະລິດ ແລະ ການປຸງແຕ່ງກາເຟ

ວັນທີ 2-8 ມີນາ 2024, ທີມງານຊຸບເປີວີ ໄດ້ຈັດຕັ້ງປະຕິບັດການປະເມີນຂະບວນການຜະລິດ ແລະ ປຸງແຕ່ງກາເຟ ຢູ່ 7 ບ້ານ ມີຜູ້ເຂົ້າຮ່ວມທັງໝົດ 12 ຄົນ (ຍິງ 8 ຄົນ). ຈຸດປະສົງແມ່ນເພື່ອ ປະເມີນເຕັກນິກການປູກກາເຟ ແລະ ກວດເບິ່ງການເລືອກຕົ້ນໄມ້ໃຫ້ຮົ່ມ ແລະ ຂະບວນການແປຮູບກາເຟ. ພາຍຫຼັງສຳເລັດການປະເມີນຜົນ ເຫັນວ່າ: ສາງເກັບກາເຟແມ່ນມີຂະໜາດນ້ອຍ ແລະ ຕ້ອງໄດ້ປັບປຸງຄືນໃໝ່, ສົ່ງເສີມການປູກຕົ້ນໄມ້ໃຫ້ໝາກໃນສວນກາເຟແບບປະສົມປະສານ ເພາະຈະຊ່ວຍໃຫ້ຊາວກະສິກອນສາມາດສ້າງລາຍໄດ້ຈາກການຂາຍໝາກໄມ້ເພີ່ມເຕີມ ແລະ ສົ່ງເສີມການປູກຕົ້ນໄມ້ໃຫ້ຮົ່ມ. ຕິດຂໍ້ມູນດ້ານເຕັກນິກການຕາກກາເຟໃນເຮືອນຮົ່ມ ແລະ ຊຸກຍູ້ໃຫ້ຊາວກະສິກອນລິເລີ່ມການສົ່ງຕົວຢ່າງກາເຟໃຫ້ແກ່ຜູ້ປະກອບການກາເຟ ເພື່ອຈະໄດ້ເປັນໂອກາດທີ່ດີໃນການກວດຄຸນພາບ ແລະ ຂາຍກາເຟ.





## ມີນາ

### ກອງປະຊຸມ ແລກປ່ຽນບົດຮຽນຊາວກະສິກອນ

ໃນວັນທີ 4-5 ມີນາ 2024, ໂຄງການ ຊຸບເປີວີ ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 77 ຄົນ (ຍິງ 45 ຄົນ) ໃນ 13 ບ້ານ ໂດຍຕາງໜ້າໃຫ້ກັບກຸ່ມຜູ້ຜະລິດກາເຟ ແລະ ຜູ້ອຳນວຍຄວາມສະດວກໃນໂຮງຮຽນຊາວກະສິກອນ (FFS). ກອງປະຊຸມນີ້ໄດ້ອຳນວຍຄວາມສະດວກໃນການແລກປ່ຽນ ແລະ ການສົນທະນາບົດຮຽນ, ຄວາມຮູ້, ແລະ ປະສົບການທີ່ກ່ຽວຂ້ອງກັບການເກັບກ່ຽວຜົນຜະລິດ ແລະ ການແປຮູບກາເຟ. ໃນກອງປະຊຸມຍັງເວົ້າເຖິງ ເຄື່ອງຕາກກາເຟ ແລະ ການນຳໃຊ້ເຄື່ອງອື້ວກາເຟທີ່ໄດ້ຮັບການປັບປຸງ ເຫັນວ່າໄດ້ຮັບຄຳຕິຊົມໃນທາງບວກຈາກຊາວສວນ ເນື່ອງຈາກວ່າມັນມີທ່າແຮງຊ່ວຍຫຼຸດຜ່ອນເວລາຂະບວນການແປຮູບການເຟ, ແຮງງານ ແລະ ການນຳໃຊ້ນ້ຳ. ຢ່າງໃດກໍ່ຕາມ, ການປະເມີນຄວາມອາດສາມາດຂອງເຄື່ອງຈັກ, ເຄື່ອງອື້ວກາເຟ, ອັດຕາສ່ວນຄວາມເສຍຫາຍຂອງກາເຟໝາກຂາວ, ແລະ ປະລິມານການໃຊ້ພະລັງງານໄຟຟ້າ ຈະຈັດຕັ້ງປະຕິບັດໃນລະດູການເກັບກ່ຽວທີ່ຈະມາເຖິງ.





## ມີນາ

### ກອງປະຊຸມສະຫຼຸບ ແລະ ແລກປ່ຽນບົດຮຽນ

ໃນວັນທີ 13 ມີນາ 2024, ທີມງານ ໂຄງການ ຊຸບເປີວີ ໄດ້ຈັດກອງປະຊຸມສະຫຼຸບ ແລະ ແລກປ່ຽນບົດຮຽນ ໃນການຈັດຕັ້ງປະຕິບັດ ກິດຈະກຳທົດລອງ ໂຮງຮຽນ ຊາວກະສິກອນ ຢູ່ແຂວງ ເຊກອງ ໂດຍມີຜູ້ຜະລິດກາເຟທັງໝົດ 50 ຄົນ (ຍິງ 26 ຄົນ) ຈາກ 15 ບ້ານ. ພາຍໃນກອງປະຊຸມ ແມ່ນໄດ້ເວົ້າເຖິງ ການສ້າງຄວາມສະດວກໃຫ້ແກ່ການແລກປ່ຽນບົດຮຽນ ແລະ ປະສົບການຈາກການປະຕິບັດກິດຈະກຳທົດລອງຂອງໂຮງຮຽນຊາວກະສິກອນ (FFS) ຢູ່ບ້ານເປົ້າໝາຍ. ທັງນີ້, ກໍ່ເພື່ອເປັນການລິເລີ່ມການຮ່ວມມືລະຫວ່າງຜູ້ຜະລິດກາເຟ ແລະ ຄູ່ຮ່ວມງານພາກລັດຖະບານ ເພື່ອສົ່ງເສີມລະບົບການສ້າງມູນຄ່າເພີ່ມໃນຂະບວນການຜະລິດກາເຟແບບຍືນຍົງໃຫ້ແກ່ ຊາວສວນກາເຟ ຢູ່ເມືອງ ດາກຈຶງ, ແຂວງ ເຊກອງ.





## ເມສາ

### ກອງປະຊຸມປະຈຳເດືອນຮ່ວມກັບຄູ່ຮ່ວມງານ

ວັນທີ 2 ເມສາ 2024, ທີມງານ ໂຄງການ ຊຸບເປີວີ ໄດ້ຈັດກອງປະຊຸມ ປະຈຳເດືອນ ທີ່ຫ້ອງການແຄຣ໌ ເຊກອງ ໂດຍມີຕົວແທນຈາກບັນດາແຂວງ ແລະ ເມືອງເຂົ້າຮ່ວມທັງໝົດ 8 ທ່ານ (ຍິງ 2 ທ່ານ). ເປົ້າໝາຍແມ່ນເພື່ອສະເໜີ ແລະ ປຶກສາຫາລືຕໍ່ກັບບັນດາກິດຈະກຳສຳຄັນທີ່ໄດ້ສືບຕໍ່ເຮັດມາ ແຕ່ເດືອນ ກຸມພາ ຫາ ເດືອນ ມີນາ ແລະ ວາງແຜນການໃນເດືອນ ເມສາ. ນອກຈາກນັ້ນ, ທີມງານຍັງໄດ້ສະຫຼຸບລາຍງານຜົນສຳເລັດທີ່ໄດ້ຈັດຕັ້ງປະຕິບັດໃນເດືອນ ກຸມພາ ແລະ ເດືອນ ມີນາ, ບົດລາຍງານງົບປະມານ 2 ເດືອນຜ່ານມາ ແລະ ຮ່າງບົດບັນທຶກ ແລະ ຍັງໄດ້ຮ່ວມກັນຕົກລົງທີ່ຈະສ້າງແຜນຈັດຕັ້ງປະຕິບັດ ເພື່ອແນໃສ່ແກ້ໄຂບັນຫາການແປຮູບກາເຟຢູ່ໃນ 5 ບ້ານເປົ້າໝາຍຂອງໂຄງການ.





ເມສາ

## ການພົບປະກັນ ຂອງກຸ່ມຜະລິດກາເຟ ແລະ ຜູ້ຊື້-ຂາຍ ກາເຟ

ໃນລະຫວ່າງວັນທີ 4-5 ເມສາ 2024, ທີມງານ ຊຸບເປີວີ ແລະ ຕົວແທນກຸ່ມຜະລິດກາເຟ 6 ທ່ານ (ຍິງ 5 ຄົນ) ໄດ້ໄປທັດສະນະທີ່ເມືອງ ປາກຊ່ອງ ແລະ ບາຈຽງ, ແຂວງ ຈຳປາສັກ. ຈຸດປະສົງ ເພື່ອໃຫ້ພວກເຂົາໄດ້ປຶກສາຫາລື ແລະ ຮ່ວມແລກປ່ຽນຂໍ້ມູນຂ່າວສານກັບບັນດາ ຜູ້ປະກອບການກາເຟ ເຊັ່ນ: ການຂາຍກາເຟໝາກຂາວ, ໝາກຂຽວ ແລະ ການເຈລະຈາຕໍ່ລອງ. ພາຍຫຼັງໄດ້ພົບປະກັບ ຜູ້ປະກອບການກາເຟ ເຫັນວ່າມີ 4 ທ່ານ ໄດ້ສະເໜີລາຄາຊື້ 66.000 – 82.000 ກີບ/ກິໂລກຣາມ ສຳລັບກາເຟໝາກຂາວ. ສ່ວນທ່ານອື່ນແມ່ນຢາກໄດ້ຕົວຢ່າງ ກາເຟ ເພື່ອທົດສອບຄຸນະພາບກ່ອນທີ່ຈະຕົກລົງລາຄາ. ເຊິ່ງກຸ່ມຜະລິດກາເຟແມ່ນສົນໃຈໃນ ການສະເໜີລາຄາຫຼາຍ ແລະ ພວກເຂົາຍັງໄດ້ຕໍ່ລອງ ໃຫ້ໄປເອົາກາເຟຈາກບ້ານໂດຍກົງ. ເຖິງ ຢ່າງໃດກໍຕາມ, ການສະເໜີເຫຼົ່ານີ້ ຕ້ອງໄດ້ມີການສົນທະນາເພີ່ມເຕີມ ແລະ ຕ້ອງໄດ້ຮັບການ ເຫັນດີ ໂດຍກຸ່ມຜູ້ຜະລິດກາເຟທັງໝົດ.






ເມສາ

## ວາງສະແດງ ຜະລິດຕະພັນກາເຟພູດອຍ ດາກຈຶງ ທີ່ງານສະເຫຼີມສະຫຼອງຄົບຮອບ 40 ປີ ຂອງແຂວງ ເຊກອງ

ໃນລະຫວ່າງວັນທີ 2-5 ເມສາ 2024, ທີມງານໂຄງການ ຊຸບເປີວີ ໄດ້ຮ່ວມກັບ ຄູ່ຮ່ວມພາກ ລັດຖະບານ ເຂົ້າຮ່ວມວາງສະແດງ ຜະລິດຕະພັນກາເຟພູດອຍ ດາກຈຶງ ໃນງານສະເຫຼີມສະຫຼອງ ຄົບຮອບ 40 ປີ ແຂວງ ເຊກອງ. ງານໃນຄັ້ງນີ້ແມ່ນ ເປັນໂອກາດທີ່ດີຫຼາຍໃຫ້ແກ່ ກາເຟ ດາກຈຶງ ໄດ້ເປັນທີ່ຮູ້ຈັກຈາກຜູ້ເຂົ້າຮ່ວມງານໄດ້ກວ້າງຂວາງຂຶ້ນ ແລະ ຍັງເປັນການເຜີຍແຜ່ ກາເຟທີ່ມີຄຸນະພາບ ທີ່ເກັບກ່ຽວ ແລະ ຜະລິດໂດຍ ກຸ່ມກາເຟທີ່ເປັນແມ່ຍິງຊົນເຜົ່າ. ນີ້ເປັນ ການເລີ່ມຕົ້ນທີ່ຊ່ວຍໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງໂຄງການ ຊຸບເປີວີ ໃນການສະໜັບສະໜູນ ກຸ່ມຜະລິດກາເຟໃນທ້ອງຖິ່ນ ແລະ ສ້າງຄວາມເຂັ້ມແຂງໃຫ້ພວກເຂົາ ເພື່ອສ້າງການພົວພັນ ກັບຜູ້ປະກອບການກາເຟ.





## ເມສາ

### ການສົ່ງກາເຟດາກຈຶງໄປກວດຄຸນະພາບທີ່ປະເທດໄທ

ໂຄງການ ໄດ້ນໍາເອົາຕົວຢ່າງກາເຟ 6 ຕົວຢ່າງ ທີ່ມາຈາກ 6 ບ້ານເປົ້າໝາຍໃນແຂວງເຊກອງ ສົ່ງໃຫ້ແກ່ ບໍລິສັດ 111 Better Together ໃນປະເທດໄທ ເພື່ອທໍາການກວດສອບຄຸນະພາບ. ໃນປັດຈຸບັນ, ທາງທີມກວດສອບ ກໍາລັງທົບທວນຄືນການປະເມີນຜົນໄດ້ຮັບ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ປະຕິບັດຕາມຄໍາແນະນໍາຈາກ ສະຖາບັນຄຸນະພາບກາເຟ (CQI). ການທົດສອບຄຸນະພາບນີ້ມີຈຸດປະສົງ ເພື່ອປະເມີນກາເຟທີ່ຜະລິດຢູ່ໃນພື້ນທີ່ບ້ານເປົ້າໝາຍຂອງໂຄງການ ຊຸບເປີວີ ແລະ ຊ່ວຍໃຫ້ຮູ້ວ່າມີກາເຟໃນພື້ນທີ່ໃດແນ່ທີ່ຕ້ອງໄດ້ຮັບການປັບປຸງ. ຊາວສວນກາເຟ ສາມາດຍົກສູງຄຸນະພາບຂອງເມັດກາເຟ ເຊິ່ງມັນສາມາດຊ່ວຍເພີ່ມມູນຄ່າໃນຕະຫຼາດ ແລະ ຍັງສ້າງທ່າແຮງທາງດ້ານລາຍຮັບໃນຊຸມຊົນ.





## ເມສາ

### ຝຶກອົບຮົມການເປັນສະຫະກອນກາເຟ

ໃນວັນທີ 23-28 ເມສາ 2024, ໂຄງການ ຊຸບເປີວີ ໄດ້ຈັດຕັ້ງປະຕິບັດ ຝຶກອົບຮົມການເປັນສະຫະກອນກາເຟ ຢູ່ 15 ບ້ານ, ເມືອງ ດາກຈຶງ, ແຂວງ ເຊກອງ ໂດຍມີຊາວສວນກາເຟເຂົ້າຮ່ວມທັງໝົດ 185 ຄົນ (ຍິງ 111 ຄົນ). ການຝຶກອົບຮົມນີ້ ແມ່ນເພື່ອແນໃສ່ຊ່ວຍໃຫ້ກຸ່ມຜະລິດ ກາເຟໄດ້ຮັບຮູ້ກ່ຽວກັບ ບັນດານິຕິກໍາ, ລະບຽບການ, ຫຼັກການຕ່າງໆທີ່ກ່ຽວຂ້ອງຕໍ່ກັບການເປັນກຸ່ມສະຫະກອນ ແລະ ບັນດາຂໍ້ດີຂອງການເປັນກຸ່ມສະຫະກອນ. ເນື່ອງຈາກມີ 10 ບ້ານທີ່ໄດ້ຮັບການຝຶກອົບຮົມໃນປັດຈຸບັນ ເຮັດໃຫ້ເຫັນເຖິງບາດກ້າວໃນທາງບວກຫຼາຍຂຶ້ນ ແລະ ມີທ່າທີ່ຈະເຕີບໂຕໄປສູ່ຂະແໜງກາເຟ ທີ່ຍືນຍົງ ແລະ ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນສໍາລັບກຸ່ມຜະລິດກາເຟ.





## ພຶດສະພາ

### ການເກັບກຳຂໍ້ມູນ ສຳລັບປະເມີນໄລຍະກາງ ຂອງໂຄງການ

ໃນວັນທີ 6-12 ພຶດສະພາ 2024, ທີມງານ ຊຸບເປີວີ ຮ່ວມກັບທີມງານ ປະເມີນໂຄງການ ໄດ້ດຳເນີນການເກັບກຳຂໍ້ມູນສຳລັບ ການເຮັດປະເມີນໄລຍະກາງ ຂອງໂຄງການ. ຂະບວນການ ເກັບກຳຂໍ້ມູນນີ້ແມ່ນໄດ້ມາຈາກພາກສ່ວນຕ່າງໆ, ລວມທັງຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ, ພະນັກງານໂຄງການ, ພະນັກງານທ້ອງຖິ່ນ ແລະ ຄູ່ຮ່ວມງານລັດຖະບານ. ຂໍ້ມູນດັ່ງກ່າວຈະຖືກ ນຳໃຊ້ເພື່ອປະເມີນຄວາມຄືບໜ້າຂອງໂຄງການ, ຊ່ວຍກຳນົດພື້ນທີ່ສຳລັບການປັບປຸງ ແລະ ເຮັດໃຫ້ແນ່ໃຈວ່າການຈັດຕັ້ງປະຕິບັດກິດຈະກຳຍັງຄົງຢູ່ໃນທິດທາງເພື່ອບັນລຸຈຸດປະສົງ. ຂໍ້ມູນທີ່ເປັນຈຸດສຳຄັນໃນການເຮັດປະເມີນໄລຍະກາງຂອງໂຄງການ ຄາດວ່າຈະເຫັນຜົນໄດ້ຮັບ ໃນເດືອນ ມິຖຸນາ 2024 ນີ້.





## ພຶດສະພາ

### ກອງປະຊຸມປະຈຳປີຂອງ EU-Switch Asia

ໃນວັນທີ 20-21 ພຶດສະພາ 2024, ທ່ານ ນາງ ພອລ ຄາໂຣລາຍ ຄາຣິນໂກ, ຕົວແທນຈາກ ທີມງານໂຄງການ ຊຸບເປີວີ ຈາກ ອົງການແຄຣ໌ ໄດ້ເຂົ້າຮ່ວມກອງປະຊຸມ ປະຈຳປີ ຂອງ EU-Switch Asia ທີ່ ເມືອງ ອາວມາຕີ, ປະເທດ ຄາຊັສຖານ. ໃນມື້ທີ 1, ພວກເຮົາໄດ້ເຂົ້າ ຮ່ວມການສົນທະນາລະຫວ່າງຂະແໜງການສະເພາະກ່ຽວກັບ ພາສຕິກ, ການກໍ່ສ້າງ, ທາງດ້ານ ແຟຊັນ ແລະ ໄດ້ແລກປ່ຽນບົດຮຽນກັບບັນດາປະເທດທີ່ໄດ້ຮັບທຶນ ສະໜັບສະໜູນຈາກ EU Switch Asia ໂດຍສະເພາະແມ່ນ ໃນຂະແໜງລະບົບສະບຽງອາຫານ. ໃນມື້ທີ 2, ມີການ ສົນທະນາ ໂດຍສະເພາະກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ ທີ່ເປັນພາສຕິກ, ປຸກລະດົມບັນດາ ຫົວໜ່ວຍທຸລະກິດໃຫ້ມີສ່ວນຮ່ວມເປັນວົງກວ້າງ, ຊຸກຍູ້ການແລກປ່ຽນຄວາມຮູ້ໃນທົ່ວພາກພື້ນ. ນີ້ເປັນໂອກາດທີ່ດີທີ່ສຸດໂດຍສະເພາະຕໍ່ກັບໂຄງການ ຊຸບເປີວີ ທີ່ໄດ້ຖືກເຊີນໃຫ້ເຂົ້າຮ່ວມໃນ ກອງປະຊຸມ ເພື່ອແບ່ງປັນເພີ່ມເຕີມກ່ຽວກັບໂຄງການແລະການຮຽນຮູ້ຂອງເຂົາເຈົ້າ.



switchasia GRANTS PROGRAMME | Haliéus COOPERATIVES FOR DEVELOPMENT | 4FORM | International Cooperative Alliance Asia and Pacific | ITC International Training Centre | FAIRTRADE ITALIA



# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ

ບັນທຶກ ແລະ ແປໂດຍ: ທ່ານ ກຸ້ງມິ່ງ ຈັ້ງລືໄຊ

"ຂ້ອຍ ແລະ ຄອບຄົວຂອງຂ້ອຍ ແມ່ນຍັງຢາກຮຽນຮູ້ຫຼາຍໆຢ່າງ ຈາກໂຄງການຕື່ມ ໂດຍສະເພາະແມ່ນ ເຕັກນິກການປູກກາເຟ, ເຕັກນິກການບົວລະບັດສວນກາເຟ ແລະ ການເຮັດຝຸ່ນບົ່ມ ເພາະສິ່ງເຫຼົ່ານີ້ ຈະຊ່ວຍເພີ່ມຜົນຜະລິດຂອງກາເຟໄດ້ຫຼາຍຂຶ້ນ ລວມໄປເຖິງມີຄຸນະພາບສູງຂື້ນກວ່າເກົ່າ."

**ທ່ານ ນາງ ຫອມສະໜອນ ໄຊຍະຄາມ**
**ສະມາຊິກ ກຸ່ມຜະລິດກາເຟ**
**ບ້ານ ດາກເອີຍ, ເມືອງ ດາກຈຶງ, ແຂວງ ເຊກອງ**



ຫອມສະໜອນ ກຳລັງກວດເບິ່ງຄຸນະພາບກາເຟ.



ອີກ ມີຄວາມສຖກຫຼາຍທີ່ໄດ້ເຮັດວຽກຮ່ວມກັບເມຍຂອງລາວ.

"ແຕ່ກ່ອນຂ້ອຍ ບໍ່ຮູ້ວ່າຈະຕ້ອງຂາຍກາເຟແນວໃດ ໃຜມາຊື້ກາເຟ ຂ້ອຍກໍຂາຍໄປໃນລາຄາທີ່ຖືກ. ຫຼັງຈາກທີ່ຂ້ອຍໄດ້ເຂົ້າຮ່ວມກິດຈະກຳຂອງໂຄງການ ເຮັດໃຫ້ຂ້ອຍໄດ້ຮູ້ກ່ຽວກັບເຕັກນິກການກ້າເບ້ຍກາເຟ, ການປູກກາເຟ ແລະ ການແປຮູບກາເຟ. ນອກຈາກນັ້ນ, ຂ້ອຍກໍຍັງໄດ້ຮຽນຮູ້ກ່ຽວກັບບົດບາດທາງເພດ ເຊິ່ງມັນໄດ້ຊ່ວຍໃຫ້ຂ້ອຍໄດ້ຕັດສິນໃຈໃນການຂາຍກາເຟຮ່ວມກັບເມຍຫຼາຍຂຶ້ນ."

**ທ່ານ ອີກ**
**ສະມາຊິກ ກຸ່ມຜະລິດກາເຟ**
**ບ້ານ ດາກເດີນ, ເມືອງ ດາກຈຶງ, ແຂວງ ເຊກອງ**

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າ ອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@care.org

**ທ່ານ ຄຳປະເສີດ ເຈີດຈິງທາວ**
ຫົວໜ້າ ຫ້ອງການແຂວງ ເຊກອງ
ເບີໂທ: (+856) 20 7741 8956
ອີເມລ: khampaseuth.cheutchingthao@care.org

**ທ່ານ ນາງ ນາລາດາ ພົມວິໄຊ**
ທີ່ປຶກສາ ດ້ານການສື່ສານ ແລະ ການພົວພັນແບບມີສ່ວນຮ່ວມ
ເບີໂທ: (+856) 20 5600 5600
ອີເມລ: nalada.phomvixay@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່,
ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ: (+856-21) 217 727

ຫ້ອງການ ເຊກອງ
ເມືອງ ດາກຈຶງ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org www.careint.org.la @careinlaos CARE International in Lao PDR

care®